unesco

Together for PEACE

Silent Manga Catalogue

Teacher's Companion



サイレントマンガ

先生の手引き

ร่วมกัน
เพื่อ
สันติภาพ

คู่มือ
สำลับปั้มลอมผึมงาม
ภาดูนมังวะวงบ

Published in 2022 by the United Nations Educational, Scientific and Cultural Organization, 7, place de Fontenoy, 75352 Paris 07 SP, France

and UNESCO Bangkok Office

© UNESCO 2022

This publication is available in Open Access under the Attribution-ShareAlike 3.0 IGO (CC-BY-SA 3.0 IGO) license (https://creativecommons.org/licenses/by-sa/3.0/igo/). By using the content of this publication, the users accept to be bound by the terms of use of the UNESCO Open Access Repository (http://www.unesco.org/open-access/terms-use-ccbysa-en). Open Access is not applicable to non-UNESCO copyright photos, illustrations and manga in this publication.

The designations employed and the presentation of material throughout this publication do not imply the expression of any opinion whatsoever on the part of UNESCO concerning the legal status of any country, territory, city or area or of its authorities, or concerning the delimitation of its frontiers or boundaries.

Editorial copyright COAMIX Inc. ©2011–2021, SILENT MANGA AUDITION® is a registered trademark of COAMIX Inc., in EU and related jurisdictions.

Illustrations: artists participating in SILENT MANGA AUDITION® Round 13

Project co-ordinator: Akané Nozaki
Writer: Santibhap Ussavasodhi
Production co-ordinator: Sirisak Chaiyasook
Copy-editor: Gregory Galligan and
Assoc. Prof Dr Silinthone Sacklokham
Lao translator: Khammany Xayaheuang
Designer: Nattawud Nittayagun
Mascot designer (Penmaru): Roberto F.

TH/DOC/PIO/22/009-LA

ຈັດພິມ ໃນປີ 2022 ໂດຍ ອົງການສະຫະປະຊາຊາດ ເພື່ອການສຶກສາ, ວິທະຍາສາດ ແລະ ວັດທະນະທຳ, 7, Place de Fontenoy, 75352 Paris 07 SP, ປະເທດຝຼັ່ງ ແລະ ອຸຍແນສໂກ ພາກພື້ນ ປະຈຳບາງກອກ

© ອຸຍແນສໂກ 2022

ສິ່ງພິມສະບັບນີ້ ແມ່ນມີຢູ່ໃນ Open Access ພາຍໃຕ້ໃບອະນຸຍາດ Attribution-ShareAlike 3.0 IGO (CC-BY-SA 3.0 IGO) (https://creativecommons.org/licenses/by-sa/3.0/igo/). ເພື່ອນຳໃຊ້ເນື້ອໃນຂອງສິ່ງພິມນີ້, ຜູ້ໃຊ້ຍອມຮັບເງື່ອນໄຂ ການນຳໃຊ້ຂອງ UNESCO Open Access Repository (http://www.unesco.org/ open-access/terms-use-ccbysa-en). Open Access ບໍ່ສາມາດນຳໃຊ້ໄດ້ກັບຮູບພາບ, ພາບປະກອບ ແລະ ກາຕຸນມັງງະ ທີ່ບໍ່ແມ່ນລິຂະສິດຂອງອຸຍແນສໂກ ໃນສິ່ງພິມນີ້.

ການກຳນົດ ແລະ ການນຳສະເໜີເອກະສານ ຕະຫຼອດການພິມ ເຜີຍແຜ່ນີ້ ບໍ່ໄດ້ໝາຍເຖິງການສະແດງຄວາມຄິດເຫັນໃດໆໃນສ່ວນ ຂອງອຸຍແນສໂກ ກ່ຽວກັບສະຖານະພາບທາງດ້ານກົດໝາຍຂອງ ປະເທດ, ເຂດແດນ, ເມືອງ ຫຼື ພື້ນທີ່ ຫຼື ອຳນາດການປົກຄອງໃດໜຶ່ງ, ຫຼື ກ່ຽວກັບການກຳນົດຂອບເຂດຊາຍແດນຂອງຕົນ ຫຼື ເຂດແດນ.

ລິຂະສິດບັນນາທິການ COAMIX Inc. ©2011–2021 Silent Manga Audition ® ເປັນເຄື່ອງໝາຍການຄ້າຈົດທະບຽນຂອງ COAMIX Inc. ໃນສະຫະພາບເອີຣົບ ແລະ ເຂດອຳນາດສານທີ່ ກ່ຽວຂ້ອງ.


ພາບກາຕຸນ: ສິລະປິນທີ່ເຂົ້າຮ່ວມໃນ Silent Manga Audition ຄັ້ງທີ 13

ຜູ້ປະສານງານໂຄງການ: Akané Nozaki
ຜູ້ຂຽນ: Santibhap Ussavasodhi
ຜູ້ປະສານງານການຜະລິດ: Sirisak Chaiyasook
ຜູ້ກວດກາຕົ້ນສະບັບ: Gregory Galligan ແລະ
Assoc. Prof. Dr. Silinthone Sacklokham
ຜູ້ແປເປັນພາສາລາວ: Khammany Xayaheuang
ຜູ້ອອກແບບ: Nattawud Nittayagun
ຜູ້ອອກແບບຕຸກກະຕາ (Penmaru): Roberto F.

About the front cover | ກ່ຽວກັບພາບໜ້າປົກ

The centre features an origami dove made of shapes in the 17 colours of the Sustainable Development Goals as the symbol of peace and how each goal comes together to build peace. Characters from the manga entries are included in each shape. Penmaru, the mascot of SILENT MANGA AUDITION® is at the bottom right corner of the cover.

ພາບທາງກາງຄື ນົກເຂົາທີ່ເປັນເຈ້ຍພັບແບບຍີ່ປຸ່ນ ທີ່ເຮັດຮູບຮ່າງຕ່າງໆຈຳນວນ 17 ສີ ຕາມເປົ້າໝາຍການພັດທະນາແບບຍືນຍົງ ທີ່ເປັນ ສັນຍາລັກຂອງສັນຕິພາບ ແລະ ແຕ່ລະເປົ້າໝາຍປະກອບເຂົ້າກັນໃນການສ້າງສັນຕິພາບແນວໃດ. ຕົວລະຄອນໃນກາຕຸນມັງງະແຕ່ລະເລື່ອງ ໄດ້ຖືກຈັດເຂົ້າໃນແຕ່ລະຮູບຮ່າງ. Penmaru ເປັນກາຕຸນສັນຍາລັກຂອງ Silent Manga Audition® ທີ່ຢູ່ເບື້ອງຂວາລຸ່ມຂອງໜ້າປົກ.



Together for Peace

ຮ່ວມກັນເພື່ອສັນຕິພາບ

Silent Manga Catalogue
Teacher's Companion

ຄູ່ມືຄູສຳລັບ
ປຶ້ມລອມຜົນງານ
ກາຕູນມັງງະງຽບ

Silent Manga refers to manga stories told entirely through illustrations without the use of dialogue. This Silent Manga Catalogue Teacher's Companion is intended for use by teachers (or parents) together with Silent Manga Catalogue, a compilation of Silent Manga entries selected from SILENT MANGA AUDITION® Round 13, which was based on the theme 'Together for Peace'.

The manga stories showcase different aspects of peace as envisioned by artists around the world, and based on various related topics such as out-of-school children, lifelong learning, anti-bullying, conflict, youth, learning to live together, refugees and shared histories. Through the power of Silent Manga, teachers can use such manga stories to spark a thought-provoking discussion among younger generations that represent the chief architects of world peace not only in our own times, but in the years to come.

ภาตูนมังงะงຽบ ໝາยเถิงเลื่องภาตูนมังงะที่เล่าเลื่องทังໝดผ่านธูบแต้มโดยบ่มีการนำใช้ปิดสินทะนา. คู่มือคู สำลับปั๊มลอมผินงานภาตูนมังงะงຽบนี้ มิจุดปะสิง เพื่อใท้คูสอน (หรือ พ่แม่) นำใช้ธ่อมกับปั๊มลอมผินงานภาตูนมังงะงຽบ เซิ่งลอบลอมมาจากผินงานภาตูนมังงะที่เข้าปะกอด โดยถืกถัดเลือกจาก SILENT MANGA AUDITION® ถั้งที่ 13 พายใต้หัวข้อ "ธ่อมกัน เพื่อสันติพาบ".

เนื้อเลื่องของภาตูนมังงะ สะแดงใท้เห็นลักสะนะที่แตกต่างกันของสันติพาบตามจินตะนาการของสิละปั๋นในทั่วโลก ละ อิงใส่หัวข้อต่างๆที่ก่งวข้องเช่น: เด็กน้อยที่บ่ได้เข้าโธงธงน, การธงนรู้ตะหูอดชีวิด, การต้านการยิ่มเห็ง, ถอามขัดแย้ง, เลื่องไอหนุ่ม, การธงนรู้การยู่ธ่อมกัน, ซาออิบพะยิบ ละ การมิปะหวัดสาดธ่อมกัน. ผ่านภาตูนมังงะงຽบนี้, ถูสอนสามาดนำใช้ปิดเลื่องภาตูนมังงะดั่งก่าว จูดปะกายใท้เกิดถอามคิดที่กะตุ้นการสินทะนาละหว่างไอหนุ่มที่เป้นตือแทนของสันติพาบโลก บ่พงงแต่ในยุกของพอกเฮาเท่านั้น, แต่ในฮุมปีต่หน้าอิกด้วย.

Silent Manga contain no dialogue and are meant to be read in Japanese style, right to left, which may be challenging for some readers. Summaries of manga stories are provided for easier comprehension. For further guidance, please refer to reading instructions on Page 4 of the Silent Manga Catalogue.

Reading comprehension questions (marked with 🕮 icon) and **thought-provoking questions for group discussions** (marked with 💬 icon) are provided at the end of each manga summary.

🕮 **Reading comprehension questions** can help assess if a student understands what he/she has read. They can be asked verbally or as a writing assignment after reading. There is no one correct answer to these questions. The questions are means to encourage students to express what they have understood and felt about the stories.

💬 **Group discussion** can encourage students to learn to express their viewpoints and to practise thoughtful reasoning. Students can be asked how they would address a certain issue if they were leaders or policymakers. Follow-up questions can be added by the teacher.

More activities are provided at the end of this Teacher's Companion. Teachers are welcome to adapt these activities as they see fit, including for online learning.

ກາຕູນມັງງະຽງບບໍ່ມີບົດສົນທະນາ ແລະ ໃຫ້ອ່ານໃນແບບປຶ້ມພາສາຍີ່ປຸ່ນ ຄືຈາກຂວາຫາຊ້າຍ ເຊິ່ງອາດຈະເປັນສິ່ງທ້າທາຍສຳລັບຜູ້ອ່ານບາງຄົນ. ບົດສະຫຼຸບຫຍໍ້ຂອງກາຕູນມັງງະ ແມ່ນເຮັດ ເພື່ອໃຫ້ເຂົ້າໃຈໄດ້ງ່າຍຂຶ້ນ. ຄຳແນະນຳເພີ່ມເຕີມ, ກະລຸນາເບິ່ງຄຳແນະນຳການອ່ານຢູ່ໃນໜ້າທີ 4 ຂອງປຶ້ມລອມຜິນງານກາຕູນມັງງະຽງບ.

ຄຳຖາມ ເພື່ອຄວາມເຂົ້າໃຈໃນການອ່ານ (ສັນຍາລັກດ້ວຍ 🕮) ແລະ **ຄຳຖາມກະຕຸ້ນ ຄວາມຄິດ ເພື່ອການສົນທະນາກຸ່ມ** (ສັນຍາລັກດ້ວຍ 💬) ມີຢູ່ໃນທ້າຍບົດສະຫຼຸບຂອງ ກາຕູນມັງງະແຕ່ລະເລື່ອງ.

🕮 **ຄຳຖາມ ເພື່ອຄວາມເຂົ້າໃຈໃນການອ່ານ** ສາມາດຊ່ວຍປະເມີນວ່ານັກຮຽນເຂົ້າໃຈສິ່ງທີ່ ອ່ານ ຫຼື ບໍ່, ສາມາດຖາມນັກຮຽນດ້ວຍປາກເປົ່າ ຫຼື ເປັນການຂຽນບົດຄວາມຫຼັງຈາກອ່ານ ແລ້ວ ເຊິ່ງບໍ່ມີຄຳຕອບທີ່ຖືກຕ້ອງພຽງຄຳຕອບດຽວ ສຳລັບຄຳຖາມເຫຼົ່ານີ້. ຄຳຖາມເຫຼົ່ານີ້ ໝາຍເຖິງການຊຸກຍູ້ໃຫ້ນັກຮຽນສະແດງຄວາມເຂົ້າໃຈ ແລະ ຄວາມຮູ້ສຶກກ່ຽວກັບເລື່ອງ ຕ່າງໆ.

💬 **ການສົນທະນາກຸ່ມ** ສາມາດຊຸກຍູ້ໃຫ້ນັກຮຽນ ຮຽນຮູ້ການສະແດງຄວາມຄິດເຫັນຂອງ ເຂົາເຈົ້າ ແລະ ຝຶກການຄິດຫາເຫດຜົນ. ສາມາດຖາມນັກຮຽນວ່າຈະແກ້ໄຂບັນຫາໃດໜຶ່ງ ແນວໃດ ຖ້າເຂົາເຈົ້າເປັນຜູ້ນຳ ຫຼື ຜູ້ວາງນະໂຍບາຍ. ອາຈານສາມາດສ້າງຄຳຖາມລີງເລິກ ເພີ່ມໄດ້.

ກິດຈະກຳເພີ່ມເຕີມ ແມ່ນມີໃຫ້ໃນຕອນທ້າຍຂອງຄູ່ມືຄູນີ້. ຄູອາຈານ ສາມາດດັດປັບກິດຈະ ກຳເຫຼົ່ານີ້ ທີ່ເຫັນວ່າເໝາະສົມ ລວມທັງການຮຽນຮູ້ທາງອອນໄລນ໌.

Invisible | ເບິ່ງບໍ່ເຫັນ



By João Eddie
Brazil | ປະເທດເບຼຊິນ

Standing in a landfill, a young boy, who has been forced by his stepfather to work by collecting rubbish, finds a book. During lunchtime, he throws his mouldy bread to the birds. At night, he sees in the book how children usually go to school. One day, the boy decides to run away. His stepfather tries to stop him, but is attacked by the birds. The boy breaks out crying, as he cannot catch up with the departing school bus. A woman whose image appears on the book's cover finds the boy with the book. In the end, the boy is introduced to a new life as the woman takes him to school.

ເດັກຊາຍຜູ້ໜຶ່ງ ຢືນຢູ່ໃນບ່ອນຖິ້ມຂີ້ເຫຍື້ອ, ຜູ້ທີ່ຖືກພໍ່ລ້ຽງຂອງລາວບັງຄັບໃຫ້ເຮັດວຽກ ໂດຍການເກັບຂີ້ເຫຍື້ອ, ໄດ້ພົບເຫັນປຶ້ມໜຶ່ງເຫຼັ້ມ. ໃນລະຫວ່າງພັກກິນອາຫານທ່ຽງ, ລາວ ໄດ້ໂຍນເຂົ້າຈີ່ທີ່ມີເຊື້ອລາຂອງລາວໃຫ້ກັບນົກ. ໃນຕອນກາງຄືນ, ລາວອ່ານເຫັນຢູ່ໃນ ປຶ້ມວ່າເດັກນ້ອຍໄປໂຮງຮຽນແນວໃດ. ມື້ໜຶ່ງ, ເດັກຊາຍຕັດສິນໃຈແລ່ນໜີ ແລະ ພໍ່ລ້ຽງ ຂອງລາວພະຍາຍາມຈະຢຸດລາວ, ແຕ່ກໍຖືກໂຈມຕີໂດຍຝູງນົກ. ເດັກຊາຍຮ້ອງໄຫ້ຂຶ້ນ ດ້ວຍຄວາມເສຍໃຈ ຍ້ອນວ່າລາວ ບໍ່ທັນລົດເມຂອງໂຮງຮຽນທີ່ແລ່ນອອກໄປ. ຜູ້ຍິງທີ່ ມີຮູບພາບປາກົດຢູ່ໜ້າປົກຂອງປຶ້ມ ກໍໄດ້ພົບເດັກຊາຍກັບປຶ້ມເຫຼັ້ມນັ້ນ. ໃນທີ່ສຸດ, ເດັກຊາຍ ກໍໄດ້ຮູ້ຈັກກັບຊີວິດໃໝ່ ເມື່ອແມ່ຍິງຄົນນັ້ນໄດ້ພາລາວໄປໂຮງຮຽນ.

Why does the boy collect books and stationery from rubbish?
ເປັນຫຍັງເດັກຊາຍຈຶ່ງເກັບປຶ້ມ ແລະ ເຄື່ອງຂຽນຈາກກອງຂີ້ເຫຍື້ອ?

.....

Why is the boy 'invisible'? Give examples of groups or people who are deemed 'invisible', and how they acquire such a label.
ເປັນຫຍັງເດັກຊາຍຈຶ່ງຖືກ "ເບິ່ງຂ້າມ" ຍົກຕົວຢ່າງຂອງກຸ່ມ ຫຼື ຄົນທີ່ຖືກ "ເບິ່ງຂ້າມ" ແລະ ຍ້ອນສາເຫດໃດທີ່ຄົນເຫຼົ່ານັ້ນຖືກເບິ່ງແບບນັ້ນ.



In Your Shoes | ໃນປະສົບການຂອງເຈົ້າ

By Priscilla Miranda & Lucas Marques
Brazil | ປະເທດບຼຊິນ

A teacher finds an old photo album while cleaning the bookshelf of her dilapidated school, and she cannot help recalling the difficult and emotional experiences of one of her students. The student is too poor to afford a book that he needs for his studies. With help from his caring teacher, he finally has a chance to study with the gift of a book she has presented to him. Years later, the boy, now an adult, returns to his alma mater with books that he donates for the benefit of current students.

ຄູຄົນໜຶ່ງພົບປຶ້ມຮູບເກົ່າໆໃນຂະນະທີ່ກຳລັງທຳຄວາມສະອາດຖ້ານມ້ຽນປຶ້ມຂອງໂຮງຮຽນທີ່ຊຸດໂຊມ ເຮັດໃຫ້ລາວຫວນຄິດຮອດປະສົບການທີ່ຫຍຸ້ງຍາກ ແລະ ຝັງໃຈຕໍ່ນັກຮຽນຄົນໜຶ່ງທີ່ລາວເຄີຍສອນ. ນັກຮຽນຄົນນັ້ນທຸກຍາກເກີນໄປທີ່ຈະຊື້ປຶ້ມແບບຮຽນທີ່ລາວຕ້ອງການ. ແຕ່ດ້ວຍຄວາມຊ່ວຍເຫຼືອຈາກຄູທີ່ເປັນຫ່ວງເປັນໃຍລາວ, ໃນທີ່ສຸດລາວກໍໄດ້ມີໂອກາດທີ່ຈະຮຽນດ້ວຍປຶ້ມທີ່ຄູໃຫ້ເປັນຂອງຂວັນ. ຫຼາຍປີຕໍ່ມາ, ເດັກຊາຍໄດ້ເຕີບໂຕເປັນຜູ້ໃຫຍ່ ແລະ ກັບຄືນມາຫາໂຮງຮຽນເກົ່າຂອງລາວ ພ້ອມດ້ວຍປຶ້ມທີ່ລາວນຳມາບໍລິຈາກ ເພື່ອປະໂຫຍດຂອງນັກຮຽນໃນລຸ້ນປັດຈຸບັນ.

📖 Why does the man donate books to his school?
ເປັນຫຍັງຜູ້ຊາຍຄົນນັ້ນຈຶ່ງບໍລິຈາກປຶ້ມໃຫ້ໂຮງຮຽນເກົ່າຂອງລາວ?

.....

💬 In addition to good books, what other things and ways are important for ensuring that children have access to education?
ນອກເໜືອໄປຈາກປຶ້ມດີໆແລ້ວ, ຍັງມີສິ່ງອື່ນອັນໃດ ແລະ ວິທີໃດແດ່ທີ່ມີຄວາມສຳຄັນໃນການຮັບປະກັນໃຫ້ເດັກນ້ອຍເຂົ້າເຖິງການສຶກສາໄດ້?

Mr Roux's Math Class |

ຊົ່ວໂມງຮຽນຄະນິດສາດຂອງ ອາຈານ ຣູ



By Akimichi

Russian Federation | ສະຫະພັນຣັດເຊຍ

Students in school are enjoying their lessons in a mathematics class. An old janitor, disappointed with himself for not having had an opportunity to study when he was a young boy, looks on the happy students from the outside. The teacher then offers to clean the floor for the janitor, so that he might study, with further help provided by the students. The janitor, with his endless passion for learning, starts studying again until he one day completes his education.

ນັກຮຽນຢູ່ໃນໂຮງຮຽນ ກຳລັງມ່ວນຊື່ນກັບບົດຮຽນ ໃນຫ້ອງຮຽນຄະນິດສາດ. ພະນັກງານອະນາໄມ ແນມເບິ່ງນັກຮຽນທີ່ມີຄວາມສຸກກັບການຮຽນຈາກທາງນອກ ກໍຮູ້ສຶກຜິດຫວັງກັບຕົນເອງທີ່ບໍ່ມີໂອກາດຮຽນ ໃນຕອນຍັງນ້ອຍ. ຫຼັງຈາກນັ້ນ, ຄູ ໄດ້ອາສາທຳຄວາມສະອາດພື້ນແທນພະນັກງານອະນາໄມຄົນນັ້ນ ເພື່ອທີ່ລາວຈະໄດ້ຮຽນ ໂດຍມີການຊ່ວຍເຫຼືອຈາກນັກຮຽນຕື່ມອີກ. ພະນັກງານອະນາໄມ ທີ່ມີຄວາມປາຖະໜາອັນແຮງກ້າໃນການຮຽນຢູ່ແລ້ວ, ໄດ້ເລີ່ມຮຽນຮູ້ອີກຄັ້ງ ຈົນມື້ໜຶ່ງລາວຮຽນຈົນສຳເລັດການສຶກສາຂອງລາວ.

What might be the factors that prevented the janitor from studying when he was a young boy?

ປັດໄຈອັນໃດແດ່ທີ່ຂັດຂວາງບໍ່ໃຫ້ພະນັກງານອະນາໄມ ໄດ້ຮຽນໜັງສືຕອນຍັງນ້ອຍ?

.....

Give examples of things that you can share with an older generation, and things you will need to learn from a younger generation, in the future.

ຍົກຕົວຢ່າງຂອງສິ່ງຕ່າງໆທີ່ເຈົ້າສາມາດແບ່ງປັນກັບຄົນຮຸ່ນກ່ອນ ແລະ ສິ່ງທີ່ເຈົ້າຈະຕ້ອງໄດ້ຮຽນຮູ້ຈາກຄົນຮຸ່ນຫຼັງໃນອະນາຄົດ.



Chrysalis | ໂຕດ້ວງແມງກະເບື້ອ

By Carriere Alexandre
France | ຝຣັ່ງ

A girl goes to school with a chrysalis in her insect feeding box. She hugs the box and avoids the crowd. A mental chrysalis has formed around her as she isolates herself. A boy approaches her and asks about the chrysalis, but she pushes him away. As the insect inside cracks the chrysalis open, the girl decides to open her mind, and she rushes to the boy and shows him a beautiful butterfly.

ເດັກຍິງໄປໂຮງຮຽນກັບໂຕດ້ວງ ທີ່ບັນຈຸໃນກ່ອງເພາະລ້ຽງແມງໄມ້ຂອງລາວ. ລາວກອດຮັດກ່ອງຢ່າງແໜ້ນໜາ ແລະ ຫຼີກເວັ້ນຝູງຊົນ. ໃນຂະນະທີ່ລາວໂດດດ່ຽວ ໂຕດ້ວງທາງຈິດກໍໄດ້ກໍ່ໂຕຂຶ້ນມາ ເປັນກຳແພງອ້ອມລາວໄວ້. ເດັກຊາຍຄົນໜຶ່ງຢ່າງເຂົ້າມາຫາລາວ ແລະ ຖາມກ່ຽວກັບໂຕດ້ວງ, ແຕ່ລາວຍູ້ເດັກຊາຍອອກໄປ. ເມື່ອໂຕດ້ວງທີ່ຢູ່ພາຍໃນ ໄດ້ຝັກໂຕອອກມາ, ເດັກຍິງ ໄດ້ຕັດສິນໃຈເປີດໃຈ ແລະ ຟ້າວແລ່ນໄປຫາເດັກຜູ້ຊາຍ ແລະ ໃຫ້ລາວເຫັນແມງກະເບື້ອທີ່ມີສີສັນສວຍງາມ ພາຍໃນກ່ອງນັ້ນ.

📖 How does the girl make up with the boy? Why?
ເດັກຍິງຄືນດີກັບເດັກຊາຍໄດ້ແນວໃດ? ຍ້ອນຫຍັງ?

.....

💬 The 'wall' visible to the heart differs from one person to another. What can they be? Why do these walls exist?
"ກຳແພງ" ພາຍໃນໃຈຂອງແຕ່ລະຄົນລ້ອມຕ່າງກັນ ກຳແພງເຫຼົ່ານັ້ນອາດເປັນສິ່ງໃດໄດ້ແດ່?ຍ້ອນສາເຫດໃດ ຄົນເຮົາຈຶ່ງມີກຳແພງເຫຼົ່ານັ້ນ?

A Melody of Peace |

ທຳນອງດົນຕີແຫ່ງຄວາມສະຫງົບ



By Kenkyostudio
Spain | ສະເປນ


A girl is bullied by her classmates, who have made fun of her for wearing a wig to hide her temporary baldness. After an accident, a classmate who had instigated the teasing visits a hospital. Inspired by his curiosity over the origin of a beautiful melody, he discovers his classmate playing her violin to cheer up other sick children with baldness caused by chemotherapy treatments for cancer. After witnessing that generosity of spirit, he repents for his former actions and convinces the rest of his classmates to shave their heads in collective apology.

ເດັກຍິງຖືກເພາະເຍີ້ຍໂດຍເພື່ອນຮ່ວມຫ້ອງຮຽນ, ພວກເຂົາເຫັນວ່າການທີ່ນາງໃສ່ວິກຜົມ ເພື່ອປິດບັງຫົວລ້ານຂອງນາງ ເປັນເລື່ອງຕະຫຼົກ. ຫຼັງຈາກໄດ້ຮັບອຸບັດຕິເຫດ, ເພື່ອນຮ່ວມ ຫ້ອງຄົນໜຶ່ງທີ່ເຄີຍເພາະເຍີ້ຍລາວນັ້ນ ໄດ້ໄປໂຮງໝໍ, ເຊິ່ງຢູ່ທີ່ນັ້ນ ເຂົາໄດ້ຍິນສຽງເພງ ອັນມ່ວນອ່ວນຊ່ວນ ຈົນເຮັດໃຫ້ລາວຢາກຮູ້ຕົ້ນກຳເນີດຂອງສຽງເພງທີ່ສວຍງາມນັ້ນ, ລາວຄົ້ນພົບວ່າເດັກຍິງທີ່ລາວເຄີຍເພາະເຍີ້ຍ ກຳລັງຫຼິ້ນໄວໂອລິນຂອງນາງ ເພື່ອເປັນ ກຳລັງໃຈໃຫ້ກັບເດັກນ້ອຍເຈັບປ່ວຍ ທີ່ມີຫົວລ້ານອັນເກີດຈາກການປິ່ນປົວມະເຮັງດ້ວຍ ເຄມີບຳບັດ. ຫຼັງຈາກໄດ້ເຫັນຈິດວິນຍານທີ່ເອື້ອເຟື້ອເພື່ອແຜ່ຂອງນາງ, ລາວກໍຮູ້ສຶກເສຍໃຈ ຕໍ່ການກະທຳຜ່ານມາຂອງລາວ ແລະ ຊັກຊວນເພື່ອນຮ່ວມຫ້ອງຜູ້ອື່ນໆແຖຫົວ ເພື່ອເປັນ ການຂໍໂທດເດັກຍິງຄົນນັ້ນ.

Why does the boy feel remorse by his past actions in relation to the girl?
ເປັນຫຍັງເດັກຊາຍຈຶ່ງຮູ້ສຶກເສຍໃຈ ຍ້ອນການກະທຳທີ່ຜ່ານມາຕໍ່ເດັກຍິງຄົນນັ້ນ?

.....

What can be done to address bullying?
ສິ່ງທີ່ສາມາດເຮັດໄດ້ ເພື່ອແກ້ໄຂການຂົ່ມເຫັງ ຫຼື ເພາະເຍີ້ຍຄົນອື່ນ?



A Wordless Apology |

ການຂໍໂທດໂດຍບໍ່ໃຊ້ວາຈາ

By Marika Mangaka DZ
Algeria | ແອວຈີເຣຍ

A Syrian refugee who moves to a new school meets a boy who bullies her by making fun of her. The girl stops attending school for several days, and later he coincidentally finds her working for food. Out of curiosity, he follows her home and is shocked to find that she and her entire family have been going through tough times. Atoning for what he has done, he expresses his wordless apology by collecting donations with the help of his teacher and classmates, so they can buy everyday necessities for the girl and her family. The girl and the boy finally make up as friends.

ຜູ້ອົບພະຍົບຊາວຊີເຣຍຄົນໜຶ່ງທີ່ຍ້າຍໄປໂຮງຮຽນແຫ່ງໃໝ່ ໄດ້ພົບກັບເດັກຊາຍທີ່ມັກຂົ່ມເຫັງ ດ້ວຍການເຍາะເຍີ້ຍນາງເພື່ອຄວາມມ່ວນຊື່ນ, ເດັກຍິງບໍ່ໄດ້ມາໂຮງຮຽນຫຼາຍມື້ແລ້ວ ແລະ ຕໍ່ມາລາວບັງເອີນພົບວ່າເດັກຍິງກຳລັງເຮັດວຽກ ເພື່ອຫາເງິນລ້ຽງປາກລ້ຽງທ້ອງ. ດ້ວຍຄວາມຢາກຮູ້ຢາກເຫັນ, ລາວກໍນຳໄປຮອດເຮືອນຂອງນາງ ແລະ ຕ້ອງຕົກໃຈທີ່ພົບວ່ານາງ ແລະ ຄອບຄົວ ໄດ້ຜ່ານເວລາທີ່ຍາກລຳບາກທີ່ສຸດ. ເພື່ອເປັນການຊົດໃຊ້ໃນສິ່ງທີ່ໄດ້ເຮັດລົງໄປ, ລາວສະແດງຄວາມເສຍໃຈ ແລະ ຂໍໂທດດ້ວຍວິທີທີ່ບໍ່ໃຊ້ວາຈາແທນດ້ວຍການລວບລວມການບໍລິຈາກ ຈາກການຊ່ວຍເຫຼືອຂອງຄູ ແລະ ເພື່ອນຮ່ວມຫ້ອງຮຽນ, ດັ່ງນັ້ນ ລາວຈຶ່ງສາມາດຊື້ເຄື່ອງໃຊ້ປะຈຳວັນໃຫ້ເດັກຍິງ ແລະ ຄອບຄົວຂອງນາງ. ເດັກຍິງ ແລະ ເດັກຊາຍສຸດທ້າຍກໍກາຍເປັນເພື່ອນກັນ.


What are the possible hardships experienced by the girl and her refugee family?
ເດັກຍິງ ແລະ ຄອບຄົວອົບພะຍົບຂອງລາວ ອາດຕ້ອງພົບຄວາມຍາກລຳບາກອັນໃດແດ່?

.....

What can be the causes of bullying?
ແມ່ນຫຍັງທີ່ສາມາດເປັນສາເຫດຂອງການຂົ່ມເຫັງດ້ວຍການເຍາะເຍີ້ຍນີ້?

The Lost Boy | ເດັກຊາຍທີ່ຫຼົງຜິດ

By gawinsat
Thailand | ໄທ




Upon finding a book, a child soldier asks a prisoner being held by his militant group to teach him to read. One day, his fellow soldiers intend to kill the hostage, and a superior hands the child soldier a knife to execute the man. The boy imagines what a more normal life could be like if he could only pursue his education, and he drops the knife. When the militant superior is about to shoot the young soldier for his disobedience, another group of soldiers rescue the hostage and arrest the brutal militants. Both the hostage and the boy soldier survive the entire ordeal.

ເດັກຊາຍຄົນໜຶ່ງທີ່ເປັນທະຫານເດັກ ໄດ້ພົບເຫັນປຶ້ມເຫຼັ້ມໜຶ່ງ ແລະ ໄດ້ຂໍໃຫ້ຕົວປະກັນທີ່ຖືກກຸ່ມທະຫານຈັບກຸມມາ ສອນລາວອ່ານໜັງສື. ຢູ່ມາມື້ໜຶ່ງ, ກຸ່ມທະຫານຂອງລາວຕັ້ງໃຈຈະຂ້າຕົວປະກັນຄົນນີ້ ແລະ ຜູ້ບັນຊາການ ກໍເອົາມີດໃຫ້ທະຫານເດັກສັ່ງຫານຊາຍຄົນນັ້ນ. ເດັກຊາຍໄດ້ວາດພາບເຖິງຊີວິດປົກກະຕິວ່າຈະເປັນຄືແນວໃດ ຖ້າລາວມີໂອກາດໄດ້ສຶກສາຮ່ຳຮຽນ ແລ້ວລາວກໍຖິ້ມມີດລົງ. ເມື່ອຜູ້ບັນຊາການ ກຳລັງຈະຍິງທະຫານເດັກຄົນນີ້ຍ້ອນບໍ່ເຊື່ອຟັງຄຳສັ່ງ, ທະຫານອີກກຸ່ມໜຶ່ງກໍໄດ້ຊ່ວຍກູ້ເອົາຕົວປະກັນ ແລະ ຈັບກຸມພວກກຸ່ມຫົວຮຸນແຮງນັ້ນໄວ້. ທັງຕົວປະກັນ ແລະ ທະຫານເດັກ ກໍລອດຊີວິດຈາກຄວາມທຸກຍາກລຳບາກທັງໝົດ.

📖 Why does the boy decide not to execute the hostage as ordered by his superior?
ເປັນຫຍັງເດັກຊາຍຈຶ່ງຕັດສິນໃຈທີ່ຈະບໍ່ຂ້າຕົວປະກັນຕາມຄຳສັ່ງຂອງຜູ້ບັງຄັບບັນຊາ?

.....

💬 How are child soldiers created? Why?
ທະຫານເດັກ ຖືກສ້າງຂຶ້ນໄດ້ແນວໃດ? ຍ້ອນຫຍັງ?



Tabletop Warfare | ສົງຄາມເທິງໂຕະ

By Joe Warat
Thailand | ໄທ

A boy is witnessing two fights in progress in his own household kitchen. His parents are arguing because his father has broken an object; at the same time, two groups of ants are warring over a piece of biscuit. One of the ants sees what's going on and has an idea. It bites the boy and promptly hides from him. As the boy is looking for the ant, he falls off his chair. Only then do his parents stop arguing. As his mother tends to him, she sees her wedding photo. The parents make up, and the boy rewards the ants by splitting the biscuit between the two groups.

ເດັກຊາຍຄົນໜຶ່ງກຳລັງເຝົ້າເບິ່ງການຜິດຖຽງກັນສອງເຫດການ ທີ່ກຳລັງເກີດຢູ່ໃນເຮືອນຄົວ. ພໍ່ແມ່ ໄດ້ຖົກຖຽງກັນຍ້ອນພໍ່ໄດ້ເຮັດເຄື່ອງອັນໜຶ່ງແຕກ; ໃນຂະນະດຽວກັນ ມົດສອງກຸ່ມ ກຳກຳລັງຍາດຊີງເສດເຂົ້າໜົມຕ່ອນໜຶ່ງ. ມົດໂຕໜຶ່ງເຫັນສິ່ງທີ່ກຳລັງເກີດຂຶ້ນ ແລ້ວເກີດມີແນວຄວາມຄິດ. ມົດໄດ້ກັດເດັກຊາຍ ແລ້ວໄປລີ້ທັນທີ. ໃນຂະນະທີ່ເດັກຊາຍ ຊອກຫາມົດ, ລາວຕົກຈາກຕັ່ງຂອງລາວ ເຊິ່ງເຮັດໃຫ້ພໍ່ແມ່ຂອງລາວຢຸດເຊົາການໂຕ້ຖຽງ ກັນ. ເມື່ອແມ່ມາເບິ່ງອາການຂອງລູກ, ນາງກໍເຫັນຮູບແຕ່ງງານ. ພໍ່ກັບແມ່ກໍຄືນດີກັນ ແລະ ເດັກຊາຍໃຫ້ລາງວັນມົດໂດຍການແບ່ງເຂົ້າໜົມໃຫ້ ທັງສອງກຸ່ມ.

📖 How does the ant's bite help end the tabletop warfare?
ມົດກັດຊ່ວຍຢຸດການຜິດຖຽງກັນເທິງໂຕະໄດ້ແນວໃດ?

.....

💬 Share your experience of trying to end an argument or a conflict of some kind. What did you do? Did it work?
ຂໍໃຫ້ແບ່ງປັນປະສົບການໃນການພະຍາຍາມທີ່ຈະຢຸດເຊົາການໂຕ້ຖຽງ ຫຼື ຂໍ້ຂັດແຍ່ງ ອັນໃດອັນໜຶ່ງ. ເຈົ້າເຮັດແນວໃດ? ມັນສຳເລັດບໍ?

Neither Bright Nor Dark |

ບໍ່ສະຫວ່າງແຕ່ກໍບໍ່ໄດ້ມືດມົນ

By Laica Chrose
Brazil | ເບຼຊິນ




Two communities, the Sun people and the Moon people, are separated by a big wall. The Sun people believe that the Moon people are monsters that can summon dark clouds. Through a crack in the wall, a boy makes friends with someone from the 'monster' group. Angered by poor harvests caused by the dark clouds, the Sun people are about to fight the 'monsters'. The boy succeeds in stopping a developing conflict, working together with his 'friend', who turns out to be a young girl, not a 'monster'. The Sun people come to realise that the scary armour and dark clouds are for shielding the Moon people from the sun. Both Sun and Moon peoples then adjust their lifestyles so they can live together harmoniously.

ມີກຳແພງໃຫຍ່ຂວາງກັ້ນລະຫວ່າງສອງຊົນເຜົ່າ, ເຜົ່າສຸລິຍັນ ເຊື່ອວ່າອີກເຜົ່າໜຶ່ງເປັນ ສັດປະຫຼາດ ທີ່ສາມາດເອີ້ນເມກທີ່ມືດມົວໄດ້. ຜ່ານຮອຍແຕກແຫ່ງເທິງກຳແພງ, ເດັກຊາຍ ຄົນໜຶ່ງຈາກຊົນເຜົ່າສຸລິຍັນກໍໄດ້ທຳຄວາມຮູ້ຈັກກັບໝູ່ໃໝ່ຜູ້ໜຶ່ງຈາກຊົນເຜົ່າ "ສັດປະຫຼາດ". ຄວາມຄຽດແຄ້ນເກີດຈາກເມກດຳທີ່ບົດບັງເຮັດໃຫ້ເກັບກ່ຽວຜົນຜະລິດບໍ່ໄດ້ດີ, ເຜົ່າສຸລິຍັນ ກຳກຳລັງຈະຕໍ່ສູ້ກັບ ພວກ "ສັດປະຫຼາດ". ເດັກຊາຍປະສົບຄວາມສຳເລັດໃນການຢຸດຕິ ຄວາມຂັດແຍ້ງທີ່ກຳລັງບານປາຍ ດ້ວຍການເຮັດວຽກຮ່ວມກັບ "ເພື່ອນ" ຂອງລາວ, ຜູ້ທີ່ ຄວາມຈິງແລ້ວເປັນພຽງແຕ່ສາວນ້ອຍ ບໍ່ແມ່ນ "ສັດຮ້າຍ". ເຜົ່າສຸລິຍັນຈຶ່ງຮັບຮູ້ວ່າສິ່ງຫຸ້ມເກາະ ທີ່ໜ້າຢ້ານກົວ ແລະ ເມກດຳທີ່ມືດມົວນັ້ນ ມີໄວ້ເພື່ອປົກປ້ອງເຜົ່າຈັນທາຈາກແສງຕາເວັນ. ທັງສອງເຜົ່າສຸລິຍັນ ແລະ ເຜົ່າຈັນທາ ໄດ້ປັບປ່ຽນວິຖີດຳລົງຊີວິດ ເພື່ອໃຫ້ເຂົາເຈົ້າສາມາດ ຢູ່ຮ່ວມກັນໄດ້ຢ່າງກົມກຽວ.

What do people of the two groups have to adjust to so they can live peacefully together?
ທັງສອງເຜົ່າຕ້ອງປັບຕົວແນວໃດ ຈຶ່ງສາມາດຢູ່ຮ່ວມກັນໄດ້ຢ່າງສະຫງົບ?

What is the relationship between diversity and empathy?
ຄວາມເຫັນອົກເຫັນໃຈ ແລະ ຄວາມຫຼາກຫຼາຍ ມີຄວາມສຳພັນກັນແນວໃດ?



My Weird Roommate |

ເພື່ອນຮ່ວມຫ້ອງທີ່ແປກປະຫຼາດຂອງຂ້ອຍ

By Heitor Amatsu
Brazil | ປະເທດເບຼຊິນ

A man and a woman with different lifestyles become roommates. The man loves loud music, while the woman loves meditating quietly with incense. One day, as the man is practising his guitar, the woman's meditation crystal breaks. Upon discovering this, she cuts the man's guitar strings in revenge. Then, as she goes out, the woman falls into a river. The man comes to her rescue, and he gives her a new crystal as an apology. When the man subsequently discovers his broken guitar strings, the woman gives him new strings as her apology. They make up and find themselves able to share the room in peace.

ຜູ້ຊາຍ ແລະ ແມ່ຍິງທີ່ມີວິຖີຊີວິດທີ່ແຕກຕ່າງກັນ ກາຍມາເປັນເພື່ອນຮ່ວມຫ້ອງ. ຜູ້ຊາຍ ມັກສຽງດົນຕີດັງໆ, ໃນຂະນະທີ່ຜູ້ຍິງມັກນັ່ງສະມາທິງຽບໆພ້ອມກັບການໄຕ້ທູບ. ມື້ໜຶ່ງ, ໃນຂະນະທີ່ຜູ້ຊາຍກຳລັງຝຶກກີຕ້າຂອງລາວ, ເຮັດໃຫ້ລູກແກ້ວນັ່ງສະມາທິຂອງແມ່ຍິງ ຄົນນັ້ນແຕກອອກ, ເມື່ອແມ່ຍິງຮູ້ຄວາມຈິງ ກໍໄດ້ຕັດສາຍກີຕ້າຂອງຜູ້ຊາຍ ເພື່ອແກ້ແຄ້ນ. ຕໍ່ມາ, ນາງໄດ້ອອກໄປທາງນອກ, ກໍເສຍຫຼັກຕົກລົງໄປໃນແມ່ນ້ຳ. ຜູ້ຊາຍຄົນນັ້ນກໍໄດ້ມາຊ່ວຍ ນາງ ແລະ ໄດ້ມອບລູກແກ້ວອັນໃໝ່ ເພື່ອເປັນການຂໍໂທດ. ເມື່ອຊາຍຄົນນັ້ນພົບວ່າສາຍ ກີຕ້າທີ່ຂາດ ຜູ້ຍິງຄົນນັ້ນກໍໃຫ້ສາຍໃໝ່ແກ່ລາວ ເພື່ອເປັນການຂໍໂທດເຊັ່ນກັນ. ທັງສອງຈຶ່ງ ຄືນດີກັນ ແລະ ພົບວ່າທັງສອງຄົນ ສາມາດຢູ່ຮ່ວມຫ້ອງກັນໄດ້ຢ່າງສັນຕິ.

What are the chief differences between the man and the woman?
ຜູ້ຊາຍ ແລະ ຜູ້ຍິງ ມີຄວາມແຕກຕ່າງກັນຫຼັກໆ ໃນເລື່ອງໃດ?

How can people with differences in viewpoints or lifestyles live peacefully together?
ຄົນທີ່ມີທັດສະນະ ຫຼື ວິຖີຊີວິດທີ່ແຕກຕ່າງກັນ ຈະຢູ່ຮ່ວມກັນຢ່າງສະຫງົບສຸກໄດ້ ແນວໃດ?

Homeless | ไร้บ้าน

By Simone Sanseverino
Italy | ອິຕາລີ



Separated from his usual group, a little penguin arrives alone at a tundra. He is discriminated against and is hurt by local birds led by a father bird. The local birds see the penguin as strange and 'different', because his wings are useless for flying. A blizzard blows away the father bird's egg, which is saved by the penguin, who is good at swimming. Not yet knowing this, the father bird finds the penguin and is about to attack him, when he is joined by his local followers. The bird couple is touched to learn that their egg is safe, and the father bird feels genuinely sorry for being so mean to the penguin.

ນົກເພັນກວິນນ້ອຍໂຕໜຶ່ງ ໄດ້ຫຼົງອອກຈາກກຸ່ມ ແລະ ມາຮອດຢ່າງໂດດດ່ຽວຢູ່ທີ່ກາງ ທົ່ງທຸນດຼາ (ທະເລຊາຍຫິມະໃນຂົ້ວໂລກເໜືອ). ນົກນ້ອຍຖືກຈຳແນ, ຂົ່ມເຫັງ ແລະ ທຳຮ້າຍຈາກນົກທ້ອງຖິ່ນ ທີ່ນຳໂດຍພໍ່ນົກ. ນົກທ້ອງຖິ່ນເຫັນວ່າ ນົກເພັນກວິນແປກ ແລະ "ແຕກຕ່າງ" ເພາະວ່າປີກຂອງມັນບໍ່ມີປະໂຫຍດ ສຳລັບການບິນ. ພາຍຸຫິມະ ໄດ້ພັດເອົາ ໄຂ່ຂອງພໍ່ນົກໄປ ແລະ ນົກເພັນກວິນນ້ອຍ ກໍໄດ້ຊ່ວຍຊີວິດໄຂ່ໄວ້ ເນື່ອງຈາກລອຍນ້ຳໄດ້ ດີ. ພໍ່ນົກບໍ່ທັນຮູ້ເລື່ອງນີ້ ໄດ້ພົບເຫັນນົກເພັນກວິນນ້ອຍ ແລະ ກຳລັງຈະທຳຮ້າຍລາວ, ແຕ່ຝູງນົກເພັນກວິນ ກໍປາກົດໂຕຂຶ້ນມາກ່ອນ. ພໍ່ນົກແມ່ນົກຮູ້ສຶກດີໃຈທີ່ໄດ້ຮູ້ວ່າໄຂ່ຂອງ ພວກເຂົາປອດໄພ, ພໍ່ນົກຮູ້ສຶກເສຍໃຈຫຼາຍທີ່ຄິດບໍ່ດີຕໍ່ນົກເພັນກວິນນ້ອຍ.

Why is the penguin not initially welcomed by the father bird and other local birds?
ເປັນຫຍັງນົກເພັນກວິນ ຈຶ່ງບໍ່ໄດ້ຮັບການຕ້ອນຮັບຈາກພໍ່ນົກ ແລະ ນົກທ້ອງຖິ່ນ ອື່ນໆ?

How can differences breed hostility?
ຄວາມແຕກຕ່າງສາມາດສ້າງຄວາມເປັນສັດຕູໄດ້ແນວໃດ?



Controversy of Sky I

ການຂັດແຍ້ງຂອງທ້ອງຟ້າ

By Thuntopia
Thailand I ໄທ

After a World War, only arid desert remains on Earth, while adults are slumbering in the sky. A woman wakes up and sees a boy down below, earthbound, trying to find water from a sprout. She awakens other adults to help the boy, but they all end up fighting, as they are old enemies. As the boy is about to eat the sprout, he is stopped by an injured girl. At first they fight each other, too, but the boy suddenly stops, and they hug each other and cry together. Saddened by the incident, the adults join hands to create a stream, which enables plants to flourish again.

ຫຼັງສົງຄາມໂລກ, ໂລກກໍເຫຼືອພຽງແຕ່ທະເລຊາຍທີ່ແຫ້ງແລ້ງ ໃນຂະນະທີ່ຜູ້ໃຫຍ່ກຳລັງນອນຫຼັບຢູ່ເທິງທ້ອງຟ້າ. ຜູ້ຍິງຄົນໜຶ່ງຊວດຮູ້ເມື່ອຕື່ນຂຶ້ນ ແລະ ເຫັນເດັກຊາຍຄົນໜຶ່ງຢູ່ເທິງໂລກຂ້າງລຸ່ມ ທີ່ກຳລັງພະຍາຍາມຊອກຫານ້ຳຈາກຕົ້ນອ່ອນງອກໃໝ່. ນາງໄດ້ປຸກຜູ້ໃຫຍ່ຄົນອື່ນ ເພື່ອຊ່ວຍເດັກຊາຍ, ແຕ່ພວກເຂົາທັງໝົດພັດຕໍ່ສູ້ກັນເອງ ຍ້ອນວ່າພວກເຂົາເປັນສັດຕູເກົ່າກັນ. ໃນຂະນະທີ່ເດັກຊາຍກຳລັງຈະກິນຕົ້ນອ່ອນງອກໃໝ່ນັ້ນ ເດັກຍິງທີ່ໄດ້ຮັບບາດເຈັບຢຸ່ ກໍມາຫ້າມເຂົາໄວ້. ໃນຕອນທຳອິດພວກເຂົາກໍຕໍ່ສູ້ກັນເຊັ່ນກັນ, ແຕ່ເດັກຊາຍກໍຢຸດທັນທີ ແລະ ເຂົາເຈົ້າກໍກອດກັນ ແລະ ຮ້ອງໄຫ້ນຳກັນ. ບັນດາຜູ້ໃຫຍ່ທີ່ໂສກເສົ້າກັບເຫດການທີ່ເກີດຂຶ້ນ ຈຶ່ງຮ່ວມກັນສ້າງສາຍນ້ຳ ທີ່ຊ່ວຍເຮັດໃຫ້ພືດພັນຕົ້ນໄມ້ເຕີບໃຫຍ່ງອກງາມຄືນໃໝ່.

Why do the adults continue fighting after waking up in the sky?
ເປັນຫຍັງຜູ້ໃຫຍ່ຈຶ່ງຍັງຕໍ່ສູ້ ຫຼັງຈາກຕື່ນຂຶ້ນໃນທ້ອງຟ້າ?

What can be the possible causes for spurring people to war with each other?
ແມ່ນຫຍັງທີ່ອາດເປັນສາເຫດກະຕຸ້ນໃຫ້ຄົນເຮັດສົງຄາມຂ້າຟັນກັນ?

Legacy | ມໍລະດົກຕົກທອດ



By YUKIRA
Malaysia | ມາເລເຊຍ

An archaeologist excavating a site in Malacca finds a buried tomb. His consciousness suddenly travels back to the 15th century, as though he were a wealthy Chinese merchant. He then explores the history and diversity of the culture at the port city of Malacca. He kindly lends a hand to a boy of different race, who is in need of assistance. The boy then matures into a responsible person over the course of some years. The merchant passes away, and the archaeologist's consciousness returns to his own modern times. He realizes that he has experienced the life of the person who had saved the boy, who is one of his own ancestors.

ນັກບູຮານຄະດີກຳລັງຂຸດຄົ້ນໃນເມືອງມາລາກາ ໄດ້ຄົ້ນພົບຫຼຸມຝັງສົບ, ທັນໃດນັ້ນ ດວງຈິດຂອງລາວກໍກັບຄືນສູ່ສັດຕະວັດທີ 15 ຄືກັບວ່າລາວເປັນພໍ່ຄ້າຊາວຈີນທີ່ຮັ່ງມີ. ລາວໄດ້ສຳຫຼວດປະຫວັດສາດ ແລະ ຄວາມຫຼາກຫຼາຍທາງວັດທະນະທຳ ຢູ່ທີ່ທ່າເຮືອຂອງ ເມືອງມາລາກາ. ລາວໄດ້ເມດຕາຊ່ວຍເຫຼືອເດັກຊາຍຜູ້ໜຶ່ງທີ່ມີເຊື້ອຊາດຕ່າງກັນ ທີ່ກຳລັງ ຕ້ອງການຄວາມຊ່ວຍເຫຼືອ. ຫຼັງຈາກນັ້ນຫຼາຍປີ, ເດັກຊາຍກໍໄດ້ເຕີບໃຫຍ່ກາຍເປັນຜູ້ທີ່ ມີພາລະຄວາມຮັບຜິດຊອບ. ເມື່ອພໍ່ຄ້າໄດ້ເສຍຊີວິດລົງ ແລະ ສະຕິຂອງນັກບູຮານຄະດີ ກໍກັບຄືນມາສູ່ຍຸກປັດຈຸບັນ, ລາວສຳນຶກໄດ້ວ່າລາວໄດ້ໄປພົບເຫັນຊີວິດຂອງຜູ້ທີ່ໄດ້ຊ່ວຍ ເດັກຊາຍນັ້ນໄວ້ ຊຶ່ງເດັກຊາຍຄົນນັ້ນເປັນບັນພະບຸລຸດຂອງລາວເອງ.

How does the merchant treat the boy?
ພໍ່ຄ້າປະຕິບັດຕໍ່ເດັກຊາຍແນວໃດ?

.....

What do people of South-East Asia have in common?
ປະຊາຊົນໃນອາຊີຕາເວັນອອກສ່ຽງໃຕ້ມີຄວາມຄ້າຍຄືກັນແນວໃດ?



Over the Barriers | ຂ້າມສິ່ງກີດຂວາງ

By AntiGA
Italy | ອິຕາລີ

Four children are divided by manga frames. The first three are enjoying their time in their own frames, while by distinct contrast, a girl in the last frame apparently is living amid fighting. As the fighting intensifies, the boy who lives next to the girl's frame notices the situation. He then alerts the other two children. Working closely together, they remove parts of their manga frames to construct a ladder allowing the last girl to escape to safety.

ເດັກນ້ອຍສີ່ຄົນຖືກແຍກອອກຈາກກັນ ດ້ວຍຂອບຂອງກາຕູນມັງງະ. ໃນຂະນະທີ່ເດັກສາມຄົນທຳອິດກຳລັງມີຄວາມສຸກກັບຊີວິດຢູ່ໃນຂອບຂອງຕົນເອງ, ໃນທາງກົງກັນຂ້າມກັນ, ເດັກຍິງທີ່ຢູ່ໃນກາຕູນຂອບສຸດທ້າຍເບິ່ງຄືວ່າມີຊີວິດຢູ່ທ່າມກາງການຕໍ່ສູ້ປະທະກັນ. ເມື່ອການຕໍ່ສູ້ທະວີຄວາມຮຸນແຮງຂຶ້ນ, ເດັກຊາຍຜູ້ທີ່ຢູ່ຖັດກັບຂອບຂອງເດັກຍິງ ກໍໄດ້ສັງເກດເຫັນສະພາບການທີ່ເກີດຂຶ້ນ, ລາວຈຶ່ງໄດ້ບອກເດັກນ້ອຍອີກສອງຄົນຮູ້. ທັງສາມຈຶ່ງຮ່ວມແຮງຮ່ວມໃຈກັນມ້າງເອົາເສັ້ນຂອບຂອງຊ່ອງກາຕູນຂອງເຂົາເຈົ້າ ເພື່ອມາສ້າງເປັນຂັ້ນໄດ ໃຫ້ເດັກຍິງຄົນສຸດທ້າຍ ໜີອອກມາປ່ອນປອດໄພໄດ້.


How do the three children help the girl in the troublesome manga frame?
ເດັກນ້ອຍທັງສາມຄົນຊ່ວຍເດັກຍິງ ຢູ່ໃນຂອບຂອງກາຕູນມັງງະທີ່ກຳລັງມີບັນຫາ ຄືແນວໃດ?

.....

What can the frames and the ladder in this manga be compared with in reality? Why?
ຂອບ ແລະ ຂັ້ນໄດໃນກາຕູນມັງງະນີ້ ສາມາດປຽບທຽບກັບສິ່ງໃດໃນຄວາມເປັນຈິງໄດ້? ຍ້ອນຫຍັງ?

Prototype | ຕົ້ນແບບ

By Bakti Abdul Jabar & Jabbar Wardana
Indonesia | ອິນໂດເນເຊຍ



In an industrial factory, robots are being produced for fighting purposes. An accident has caused one of the robots to fall from the production line, its head hitting the floor, activating the installation of the original software, which is peace-loving. The robot wakes up and is confused to see other robots being produced for fighting. It then has the idea to transfer the original software to its fellow robots via a main server. Successfully escaping surveillance, the robot manages to install the original software to the server, and the data is thereby copied to all the remaining robots.

ໂຮງງານອຸດສາຫະກຳແຫ່ງໜຶ່ງ ກຳລັງຜະລິດຫຸ່ນຍົນ ເພື່ອໃຊ້ໃນການສູ້ຮົບ, ແຕ່ເກີດອຸບັດຕິເຫດ ເຮັດໃຫ້ຫຸ່ນຍົນໂຕໜຶ່ງຕົກຈາກສາຍພານການຜະລິດ. ຫົວຂອງຫຸ່ນຍົນ ກະທົບກັບພື້ນ ໄດ້ເຮັດ ໃຫ້ລະບົບການຕິດຕັ້ງຊອບແວດັ້ງເດີມກັບມາເຮັດວຽກຄືເກົ່າ, ເຊິ່ງຊອບແວດັ່ງກ່າວແມ່ນ ການຮັກສັນຕິພາບ. ເມື່ອຫຸ່ນຍົນຕື່ນຂຶ້ນມາ ແລະ ຮູ້ສຶກສັບສົນ ເມື່ອເຫັນຫຸ່ນຍົນໂຕອື່ນໆ ຖືກຜະລິດ ເພື່ອສູ້ຮົບ. ຫຸ່ນຍົນໂຕນັ້ນ ຈຶ່ງມີຄວາມຄິດທີ່ຈະໂອນຊອບແວຕົ້ນສະບັບໃຫ້ກັບ ຫຸ່ນຍົນອື່ນໆໂດຍຜ່ານເຄື່ອງເຊີບເວີ້ກາງ. ຫຸ່ນຍົນສາມາດຫຼົບຫຼີກຈາກລະບົບການຮັກສາ ຄວາມປອດໄພໄດ້ສຳເລັດ ແລະ ໄດ້ຕິດຕັ້ງຊອບແວຕົ້ນສະບັບກັບເຄື່ອງເຊີບເວີ້ ແລະ ເຮັດໃຫ້ ຫຸ່ນຍົນໂຕອື່ນໆທີ່ຍັງເຫຼືອ ຄັດລອກເອົາຊຸດຂໍ້ມູນການຮັກສັນຕິພາບນັ້ນໄປ.

Why does the robot want to install the original software to the other robots? What does the peace-loving robot do to achieve this?
ເປັນຫຍັງຫຸ່ນຍົນຈຶ່ງຕ້ອງການຕິດຕັ້ງຊອບແວຕົ້ນສະບັບໃຫ້ກັບຫຸ່ນຍົນອື່ນໆ?
ຫຸ່ນຍົນຮັກສັນຕິພາບໄດ້ເຮັດແນວໃດ ເພື່ອບັນລຸເປົ້າໝາຍ?

What are opportunities and challenges caused by artificial intelligence (AI)?
ແມ່ນຫຍັງຄືໂອກາດ ແລະ ສິ່ງທ້າທາຍທີ່ເກີດຈາກປັນຍາປະດິດ (AI)?

Writing Tasks

Some of these writing tasks can be assigned for students to practice their creative writing skills. Appropriate word limits can be added.

1. **Dialogue writing:** Write dialogues that characters in the manga frames might say if this were not a Silent Manga.

2. **Summary writing:** Write a summary of a Silent Manga and what one has learned from it.

3. **Novelization:** Write a short story based on a chosen Silent Manga.

4. **Turning point analysis:** Identify a possible turning point in a manga, and explain why it is important to the storyline.

5. **Character analysis:** Write a review of a manga character and how and why it changes in personality or behaviour over the course of the story. Refer to the Characters Sheet on Page 27, if needed.



ຝຶກການຂຽນ

ຄູອາດມອບວຽກງານຝຶກການຂຽນເຫຼົ່ານີ້ໃຫ້ນັກຮຽນ ເພື່ອຝຶກທັກສະການຂຽນທີ່ສ້າງສັນຂອງເຂົາເຈົ້າ ໂດຍສາມາດຈຳກັດຈຳນວນຄຳສັບທີ່ເໝາະສົມ.

1. **ແຕ່ງບົດສົນທະນາ**: ຈົ່ງແຕ່ງບົດສົນທະນາທີ່ຕົວລະຄອນໃນການຕູນມັງງະ ອາດຈະມີບົດສົນທະນາ ຫາກວ່ານີ້ບໍ່ແມ່ນການຕູນມັງງະງຽບ.

2. **ຂຽນບົດສະຫຼຸບ**: ຈົ່ງຂຽນບົດສະຫຼຸບຂອງເລື່ອງການຕູນມັງງະງຽບ ແລະ ສິ່ງທີ່ໄດ້ຮຽນຮູ້ຈາກເລື່ອງດັ່ງກ່າວ.

3. **ແຕ່ງເລື່ອງ**: ຈົ່ງເລືອກການຕູນມັງງະງຽບມາຂຽນເປັນເລື່ອງສັ້ນ.

4. **ວິເຄາະຈຸດປ່ຽນ**: ຈົ່ງພິຈາລະນາວ່າຈຸດປ່ຽນໃດທີ່ເປັນຈຸດປ່ຽນໃນການຕູນມັງງະ ແລະ ອະທິບາຍວ່າຈຸດປ່ຽນນັ້ນ ມີຄວາມສຳຄັນຕໍ່ເນື້ອເລື່ອງແນວໃດ.

5. **ວິເຄາະລັກສະນະຕົວລະຄອນ**: ຈົ່ງຂຽນວິເຄາະລັກສະນະຕົວລະຄອນໃນການຕູນມັງງະ ແລະ ອະທິບາຍວ່າເປັນຫຍັງຕົວລະຄອນນັ້ນຈຶ່ງປ່ຽນນິໄສ ຫຼື ພຶດຕິກຳ ເມື່ອເລື່ອງລາວດຳເນີນໄປ ແລະ ຕົວລະຄອນນັ້ນປ່ຽນແປງໄປແນວໃດ, ຖ້າຫາກຕ້ອງການ ສາມາດເປີດເບິ່ງຕາຕະລາງຕົວລະຄອນຢູ່ໜ້າ 27.



Activity 1: Role-playing (with or without dialogue)

1. Divide students into groups.
2. Draw lots to decide which manga a group will do the role-playing, and their order of performance.
3. The numbers of characters in a manga and group members may vary. The story can be adapted to the particular circumstances at hand.

Activity 2: Mime

1. Divide students into two groups.
2. Each group takes turn in sending a member to the teacher, who will point to one character from the Characters Sheet on Page 27.
3. The student performs the mime based on the chosen character, while others try to guess from which manga the mime originates, as well as which particular character the student is miming.
4. The group that can answer correctly scores a point. The group with the highest points after several rounds wins the game.

Activity 3: Drawing manga

Ask students to draw their favourite manga character(s) from the Silent Manga Catalogue or from a manga they read. Also ask them to share why they love this/these characters.

Older students can be asked to draw a three-panel or a four-panel manga strips. To add another layer of challenge, the manga strips can be silent manga. (Only onomatopoeia is allowed.)

ກິດຈະກຳທີ 1: ການສະແດງລະຄອນ (ມີ ຫຼື ບໍ່ມີບົດສົນທະນາກໍໄດ້)

1. ແບ່ງນັກຮຽນອອກເປັນກຸ່ມ.
2. ຈັບສະຫຼາກ ເພື່ອຕັດສິນໃຈວ່າກຸ່ມໃດຈະສະແດງກາຕູນມັງງະເລື່ອງໃດ ແລະ ຈັດລຳດັບການຂຶ້ນສະແດງ.
3. ຈຳນວນສະມາຊິກໃນກຸ່ມ ແລະ ຈຳນວນຕອນລະຄອນໃນກາຕູນມັງງະ ອາດຈະແຕກຕ່າງກັນ ໂດຍເນື້ອເລື່ອງສາມາດດັດປັບໃຫ້ເຂົ້າກັບສະຖານະການຕາມຄວາມເໝາະສົມ.

ກິດຈະກຳທີ 2: ການບອກດ້ວຍລັກສະນະທ່າທາງ

1. ແບ່ງນັກຮຽນອອກເປັນສອງກຸ່ມ.
2. ໃຫ້ແຕ່ລະກຸ່ມປ່ຽນກັນສົ່ງຕົວແທນໄປຫາຄູ, ຄູຈະຊີ້ໄປຫາພາບໜຶ່ງໂຕລະຄອນໂຕໃດໂຕໜຶ່ງ ຈາກຕາຕະລາງໂຕລະຄອນໃນໜ້າ 27.
3. ໃຫ້ຕົວແທນກຸ່ມບອກດ້ວຍລັກສະນະທ່າທາງ ຮຽນແບບຕົວລະຄອນທີ່ຄູຊີ້ ແລະ ໃຫ້ສະມາຊິກໃນກຸ່ມທາຍວ່າແມ່ນມາຈາກກາຕູນມັງງະເລື່ອງໃດ ແລະ ກຳລັງຮຽນແບບຕົວລະຄອນໃດ.
4. ກຸ່ມທີ່ຕອບຖືກ ຈະໄດ້ຄະແນນ ແລະ ກຸ່ມທີ່ມີຄະແນນສູງສຸດຈາກການຫຼິ້ນທຸກຮອບຫຼາຍທີ່ສຸດຈະເປັນຜູ້ຊະນະ.

ກິດຈະກຳທີ 3: ການແຕ້ມກາຕູນມັງງະ

ໃຫ້ນັກຮຽນແຕ້ມຕົວລະຄອນກາຕູນມັງງະທີ່ເຂົາເຈົ້າມັກຈາກປຶ້ມລອມຜົນງານກາຕູນມັງງະງຽບ ຫຼື ຈາກກາຕູນມັງງະທີ່ພວກເຂົາເຄີຍອ່ານ. ໃຫ້ແຕ້ມໜຶ່ງ ຫຼື ຫຼາຍຕົວລະຄອນກໍໄດ້ ແລະ ຖາມເຫດຜົນພວກເຂົາວ່າເປັນຫຍັງ ຈຶ່ງມັກຕົວລະຄອນດັ່ງກ່າວ.

ນັກຮຽນທີ່ໃຫຍ່ກວ່າ ອາດຈະຂໍໃຫ້ແຕ້ມຮູບກາຕູນມັງງະ ສາມຊ່ອງ ຫຼື ສີ່ຊ່ອງ ຫຼື ອາດເພີ່ມຄວາມທ້າທາຍອີກຂັ້ນ ດ້ວຍການກຳນົດໃຫ້ແຕ້ມກາຕູນມັງງະງຽບ ອະນຸຍາດໃຫ້ໃຊ້ຄຳເວົ້າທີ່ແທນສະເພາະສຽງ ຫຼື ຮຽນສຽງຈາກທຳມະຊາດເທົ່ານັ້ນ.

Do let us know how you use the Silent Manga Catalogue for teaching and learning! You can do so by way of the following:

1) Share your story and photos with us by email, at pio.bangkok@unesco.org.
2) Post several photos on social media with captions. Please add #TogetherForPeace and #SilentMangaAudition and tag these social media accounts depending on the platform you use.

@unescobangkok and @SilentMangaAudition

@unescobangkok and @SilentMangaComm

@unescobangkok and @silent_manga_audition

By submitting photos to us or by posting photos on social media, please make sure that you have obtained permission from any persons, adults and parents/guardians of children, who are featured in the photograph(s).

ກະລຸນາບອກໃຫ້ພວກເຮົາຮູ້ວ່າທ່ານໃຊ້ປຶ້ມລອມຜົນງານກາຕູນມັງງະງຽບ ສຳລັບການສອນ ແລະ ການຮຽນຮູ້ແນວໃດ. ທ່ານສາມາດເຮັດແນວນັ້ນໂດຍວິທີດັ່ງຕໍ່ໄປນີ້:

1. ແບ່ງປັນເລື່ອງລາວ ແລະ ຮູບພາບຂອງທ່ານກັບພວກເຮົາທາງອີເມວທີ່ pio.bangkok@unesco.org
2. ໂພສຮູບໃນສື່ສັງຄົມພ້ອມຄຳບັນຍາຍ. ກະລຸນາເພີ່ມ #TogetherForPeace ແລະ #SilentMangaAudition ແລະ ແທັກບັນຊີສື່ສັງຄົມເຫຼົ່ານີ້ຂຶ້ນກັບຊ່ອງທາງທີ່ທ່ານໃຊ້.


@unescobangkok ແລະ @SilentMangaAudition

@unescobangkok ແລະ @SilentMangaComm

@unescobangkok ແລະ @silent_manga_audition

ໃນການສົ່ງຮູບພາບໃຫ້ພວກເຮົາ ຫຼື ໂພສຮູບພາບໃນສື່ສັງຄົມ, ກະລຸນາກວດຄືນໃຫ້ແນ່ໃຈ ວ່າທ່ານໄດ້ຮັບອະນຸຍາດຈາກບຸກຄົນ, ຜູ້ໃຫຍ່ ແລະ ພໍ່ແມ່/ຜູ້ປົກຄອງຂອງເດັກນ້ອຍ, ຜູ້ທີ່ມີຢູ່ໃນຮູບພາບ.

Characters Sheet Page | ຕາຕະລາງຕົວລະຄອນ



ຂໍຂອບໃຈເປັນພິເສດ ມາຍັງຄູ່ຮ່ວມງານຂອງພວກເຮົາ



From
the People of Japan

SMA SILENT MANGA AUDITION

JAPANFOUNDATION

หอศิลปวัฒนธรรมแห่งกรุงเทพมหานคร
BANGKOK ART AND CULTURE CENTRE

กรุงเทพมหานคร

KP Learning Space

UNESCO Bangkok Office
Mom Luang Pin Malakul Centenary Building

920 Sukhumvit Road, Prakanong,
Klongtoei, Bangkok 10110, Thailand

bangkok@unesco.org
+66 2 391 0577

https://bangkok.unesco.org
@unescobangkok